

## ອົງກອນການກຸສົລແນວນີ້ກໍ່ມີ (ຕໍ່)

ດັ່ງທີ່ຜູ້ຂຽນໄດ້ຂຽນໄວ້ເທື່ອກ່ອນນີ້ *ADEDS* ແມ່ນອົງກອນການກຸສົລແບບ 100% ຂໍທົບທວນຄືນອີກເທື່ອນຶ່ງວ່າ ອົງກອນອການກຸສົລແບບ 100% ແນວໃດ? ຄືອົງກອນການກຸສົລ *ADEDS* ນີ້ບໍ່ໄດ້ເອົາເງິນທີ່ບັນດາທ່ານຜູ້ໃຈບຸນທັງຫລາຍໄດ້ໂມທະນາທານນັ້ນໄປໃຊ້ຈ່າຍຢ່າງອື່ນ ທີ່ນອກເຫນືອຈາກຈຸດປະສົງຕົ້ນຕໍຂອງ *ADEDS* ທີ່ບົ່ງໄວ້ ຄືການສ້າງສາໂຮງຮຽນໂຮງຫມໍໃນເຂຕທຸຣະກັນດານໃນ ລາວ ແລະ ຂແມນເທົ່ານັ້ນ *ADEDS* ຈະບໍ່ນຳເອົາເງິນທີ່ທ່ານບໍຣິຈາກທານໄປໃຊ້ຈ່າຍໃນການບໍຣິຫານ ດັ່ງເຊັ່ນຄ່າຊື້ເຈັຽຊື້ສໍ, ຄ່ານ້ຳມັນ, ຄ່າເຄື່ອງບິນໃນການເດີນທາງໄປລາວຫຼືຂແມນ ຫຼືຄ່າໃຊ້ຈ່າຍໃນການບໍຣິຫານອື່ນໆ ແຕ່ຈະນຳທຶນທີ່ທ່ານບໍຣິຈາກນັ້ນໄປໃຊ້ຈ່າຍໃນການສ້າງສາ ໂຮງຮຽນ ໂຮງຫມໍ ໃນລາວ ແລະ ຂແມນເທົ່ານັ້ນຢ່າງ100%

ເພື່ອຄວາມກະຈ່າງແຈ້ງເພີ່ມອີກຄ່າໃຊ້ຈ່າຍທັງຫມົດເຊັ່ນ ຄ່າເຊົ່າ, ຄ່າເຈັ້ຽຄ່າສໍ, ຄ່າພິມຫນັງສື, ຄ່າໄປສະນີ ເວົ້າລວມຄືຄ່າບໍຣິຫານຕ່າງໆນັ້ນແມ່ນໃຜຈ່າຍ ຜູ້ຂຽນໄດ້ຮັບຂໍ້ມູນນີ້ໂດຍກົງຈາກທ່ານປະທານຂອງ *ADEDS* ໂດຍກົງແລະຈະຂໍນຳມາຂຽນລົງໃຫ້ບັນດາທ່ານໄດ້ອ່ານ ດັ່ງນີ້

ທຸກໆອົງກອນຍ່ອມມີຣາຍຈ່າຍເປັນຂອງທຳມະດາແລະຈະຫລີກເວັ້ນລາຍຈ່າຍຕ່າງໆນັ້ນເປັນໄປບໍ່ໄດ້ ດັ່ງນັ້ນ *ADEDS* ກໍ່ບໍ່ມີຂໍ້ຍົກເວັ້ນເຊັ່ນກັນ ຍິ່ງໄປກວ່ານັ້ນ *ADEDS* ເປັນອົງກອນການກຸສົລແບບສາກົລຄືຕ້ອງພົວພັນກັບຕ່າງປະເທດ ເພາະປະເທດທີ່ *ADEDS* ຈະໄປສ້າງສານັ້ນຢູ່ໄກແລະຢູ່ໃນຕ່າງປະເທດທີ່ເປັນເອກະຣາດທີ່ບໍ່ໄດ້ຂຶ້ນກັບປະເທດການາດາ ດັ່ງນັ້ນຈຶ່ງມີຄ່າໃຊ້ຈ່າຍສູງ ໃນເມື່ອມີຄ່າໃຊ້ຈ່າຍສູງແລ້ວ *ADEDS* ເຮັດແນວໃດໂດຍທີ່ບໍ່ໄດ້ໃຊ້ເງິນບໍຣິຈາກທານຂອງມະຫາຊົນທີ່ບໍຣິຈາກມາໃຊ້ຈ່າຍ ມັນເປັນໄປໄດແນວໃດທ່ານຜູ້ອ່ານ? ຍ້ອນຄວາມເສັຽສະລະຂອງບັນດາພະນັກງານອາສາສະມັກທຸກໆທ່ານຂອງ *ADEDS* ທີ່ປະຕິຍານຕົນເຂົ້າຮັບໃຊ້ວຽກງານບໍຣິຫານ ເຊັ່ນ ປະທານ, ເລຂານຸການ, ນາຍບັນຊີ, ຊ່າງ ແຕ້ມແລະອອກແບບແຜນຜັງໂຮງຮຽນ **(architect)**, ຊ່າງອອກແບບ **siteweb** ແລະ ການປັບປຸງຮັກສາ **siteweb,** ລ້ວນແຕ່ແມ່ນອາສາສະມັກທຸກໆຄົນໃຊ້ເວລາແລະທຶນຂອງຕົນເອງເພື່ອໃຫ້ວຽກງານທຸກຂະແຫນງຂອງ *ADEDS* ສຳເຣັດລຸລ່ວງໄດ້ດ້ວຍດີ ຜ່ານມາ *ADEDS* ໄດ້ກໍ່ສ້າງໂຮງຮຽນແລ້ວໜຶ່ງຫລັງ, ຂຸດອ່າງເກັບນ້ຳໃຫ້ຫມູ່ບ້ານໃນເຂຕທຸຣະກັນດານໄດ້ນຶ່ງແຫ່ງ, ສ້າງ **siteweb** ຂອງ *ADEDS* ຊຶ່ງເປີດເປັນທາງການມາແຕ່ຕົ້ນປີ **2004** ຂໍເຊີນທ່ານຜູ້ອ່ານຕິດຕາມລາຍລະລຽດຂອງທຸກວຽກງານຣາຍຮັບຣາຍຈ່າຍ ແລະ ໂຄງການຕ່າງໆຂອງ *ADEDS* ໄດ້ທີ່ **www.adeds.org** ຊຶ່ງໄດ້ເຮັດເປັນ 2 ພາສາ ຝຣັ່ງແລະ ອັງກິດ ທ່ານຈະເຂົ້າໃຈແລະຮັບຮູ້ໂຄງການຂອງ *ADEDS* ໄດ້ດີຍິ່ງຂຶ້ນ.

ໂອກາດໜ້າຜູ້ຂຽນຈະນຳລາຍລະອຽດກ່ຽວກັບການຮ່ວມມືຂອງຣັຖບາລແລະການໃຫ້ການສະນັບສນຸນໃນການໃຊ້ຈ່າຍຂອງ *ADEDS* ໃນຮູບຂອງ *Donation* ແນວໃດ.